ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------------

ສໍານັກງານນາຍົກລັດຖະມົນຕີ ເລກທີ 35 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 06 .09. 2007

# ຄໍາສັ່ງ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍການຫັນ ວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ລວມສູນຕາມສາຍຕັ້ງຂຶ້ນໂດຍກົງກັບກະຊວງການເງິນ

ເຖິງ: - ລັດຖະມົນຕີວ່າການ ກະຊວງການເງິນ;

- ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໃນທົ່ວປະເທດ.

ໃນໄລຍະຜ່ານມາ, ການຄຸ້ມຄອງວຽກງານການເງິນ ແລະ ງົບປະມານແຫ່ງລັດ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຮັກສາໄດ້ຄວາມມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມໃນລະດັບອັນແນ່ນອນ.

ເຖິງຢ່າງໃດກໍ່ຕາມ, ການຄຸ້ມຄອງວຽກງານການເງິນ ແລະ ງົບປະມານແຫ່ງລັດໃນໄລຍະຜ່ານມາ ຍັງສືບຕໍ່ພົບຄວາມຫຍຸ້ງຍາກຫຼາຍດ້ານ ໂດຍສະເພາະການເກັບລາຍຮັບງົບປະມານ ຍັງບໍ່ໄດ້ຕາມທ່າແຮງບົມຊ້ອນ ຂອງເສດຖະກິດ, ການຄຸ້ມຄອງລາຍຈ່າຍງົບປະມານ ຍັງບໍ່ທັນຮັດກຸມເທົ່າທີ່ຄວນ, ເຮັດໃຫ້ສະພາບການຄຸ້ມຄອງການເງິນ ແລະ ງົບປະມານ ແຫ່ງລັດບໍ່ມີຄວາມສະຫງົບ, ບໍ່ສາມາດຕອບສະໜອງ ຕາມຄວາມຮຽກຮ້ອງຕ້ອງການ ດ້ານທຶນຮອນເຂົ້າໃນການ ພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດຢ່າງເຕັມສ່ວນ.

ສາຍເຫດຕົ້ນຕໍອັນໜຶ່ງ ແມ່ນກົງຈັກການຈັດຕັ້ງ, ກົນໄກການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ ບໍ່ທັນເໝາະສົມ ແລະ ບໍ່ສອດຄ່ອງກັບນະໂຍບາຍການປ່ຽນແປງໃໝ່ຂອງພັກ ກໍ່ຄືກົດໝາຍວ່າດ້ວຍງົບປະມານແຫ່ງລັດ. ສະນັ້ນ, ເພື່ອໃຫ້ກົງຈັກການຈັດຕັ້ງພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ຊຶ່ງເປັນພາກສ່ວນທີ່ມີພາລະບົດບາດ, ໜ້າທີ່ຕົ້ນຕໍໃນການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ ກໍ່ຄືກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ເພື່ອຮັບປະກັນໃຫ້ແກ່ການຫັນເອົາບັນດາວຽກງານດັ່ງກ່າວ ໄປສູ່ການລວມສູນຕາມສາຍຕັ້ງ ຂຶ້ນໂດຍກົງກັບກະຊວງການເງິນ ມີຄວາມຄ່ອງຕົວ, ມີຜົນສໍາເລັດ ແລະ ມີຄວາມເປັນເອກະພາບ;

ນາຍົກລັດຖະມົນຕີ ອອກຄຳສັ່ງ ດັ່ງນີ້:

## ກ. ທິດນຳ ແລະ ຫຼັກການ

1. ກ່ອນອື່ນໝົດອຳນາດການປົກຄອງທຸກຂັ້ນ ແລະ ການນຳທຸກຂະແໜງການ ຕ້ອງເຊື່ອມຊຶມເປັນເອກະພາບ ຕໍ່ການປ່ຽນແປງລະບົບການຄຸ້ມຄອງວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ໃນຄັ້ງນີ້; ເພາະວ່າເປັນການປ່ຽນແປງໃໝ່ທີ່ສຳຄັນໃນຂົງເຂດວຽກງານການເງິນ ແລະ ງົບປະມານ ເພື່ອໃຫ້ສອດຄ່ອງ ກັບແນວທາງນະໂຍບາຍ ຂອງພັກ ແລະ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ;
2. ການຄຸ້ມຄອງລວມສູນຕາມສາຍຕັ້ງຂອງສາມພາກສ່ວນດັ່ງກ່າວນີ້ ແມ່ນການປັບປຸງດ້ານພາລະບົດບາດ, ໜ້າທີ່, ໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນ ແລະ ແບບແຜນວິທີການເຮັດວຽກຄືນໃໝ່; ກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບຄຸ້ມຄອງ ລະຫວ່າງ ກະຊວງການເງິນກັບອົງການປົກຄອງທ້ອງຖິ່ນ ຕໍ່ກັບສາມພາກສ່ວນສາຍຕັ້ງໃຫ້ຈະແຈ້ງຕາມທິດດັ່ງນີ້:
   - ກະຊວງການເງິນຮັບຜິດຊອບດ້ານກົງຈັກ, ບຸກຄະລາກອນ, ເຕັກນິກວິຊາການ, ການຝຶກອົບຮົມ, ງົບປະມານ, ສະຖານທີ່ເຮັດວຽກ ແລະ ພາຫະນະອຸປະກອນຕ່າງໆ;
   - ຄະນະພັກ, ອົງການປົກຄອງທ້ອງຖິ່ນຮັບຜິດຊອບຊີວິດການເມືອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວິຊາສະເພາະ ຂອງສາມພາກສ່ວນສາຍຕັ້ງ ໃຫ້ສາມາດປະຕິບັດໜ້າທີ່ໄດ້ເປັນຢ່າງດີ ແລະ ຄ່ອງຕົວ.
3. ການຫັນເປັນສາຍຕັ້ງໃນຄັ້ງນີ້ຕ້ອງຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຮັກສາຄວາມສາມັກຄີ ແລະ ຮັບປະກັນໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ, ແນ່ໃສ່ເຮັດ ໃຫ້ຂົງເຂດວຽກງານການເງິນ ແລະ ງົບປະມານມີປະສິດທິພາບ, ປະສິດທິຜົນໃໝ່ດີກວ່າເກົ່າ ຢ່າງຈະແຈ້ງ, ຕ້ອງຮັບປະກັນ ບໍ່ໃຫ້ລາຍຮັບພາສີ ແລະ ສ່ວຍສາອາກອນ ຫຼຸດລົງຈາກແຜນການທີ່ວາງໄວ້ ແລະ ເກີດມີການຕົກເຮ່ຍເສຍຫາຍຕໍ່ຊັບສິນຕ່າງໆຂອງລັດຕະຫຼອດໄລຍະການສັບຊ້ອນປັບປຸງນີ້;
4. ການຫັນຕ້ອງມີການວາງແຜນຢ່າງຮອບດ້ານ, ຄົບຊຸດ ແລະ ຈັດຕັ້ງປະຕິບັດ ທົດລອງເປັນແຕ່ລະບາດກ້າວ ຢ່າງໜັກແໜ້ນ ໂດຍອີງຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງຂອງແຕ່ລະທ້ອງຖິ່ນ.

## ຂ. ເນື້ອໃນວຽກງານ

1. ໃຫ້ຄະນະນຳກະຊວງການເງິນ, ແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ແລະ ເຮັດວຽກງານນຳພາການເມືອງແນວຄິດ ໃຫ້ແກ່ພະນັກງານ, ລັດຖະກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຄຸ້ມ ຄອງຂອງກະຊວງ ແລະ ທ້ອງຖິ່ນຂອງຕົນ ເພື່ອໃຫ້ເຂົາເຈົ້າໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນ ການຄຸ້ມຄອງລວມສູນຕາມສາຍຕັ້ງຂອງ 3 ວຽກງານດັ່ງກ່າວ;
2. ໃຫ້ກະຊວງການເງິນ ສົມທົບກັບບັນດາແຂວງ ແລະ ນະຄອນຫຼວງ ກະກຽມ ແລະ ດຳເນີນການຫັນຕົວຈິງ ນັບແຕ່ຕົ້ນເດືອນ ກັນຍາ 2007 ເປັນຕົ້ນໄປ ແລະ ໃຫ້ສາມາດເລີ່ມຈັດຕັ້ງປະຕິບັດໄດ້ໃນ ຕົ້ນສົກງົບປະມານ 2007-2008 ໂດຍກຳນົດເອົາພາສີປະຈຳເຂດ, ແຂວງຈຳນວນໜຶ່ງ ທີ່ມີເງື່ອນໄຂປະຕິບັດໄປກ່ອນຢ່າງຄົບຊຸດ. ສ່ວນພາສີປະຈຳເຂດ, ແຂວງອື່ນໆ ກໍໃຫ້ປະຕິບັດໄປພ້ອມໆກັນ ຕາມເງື່ອນໄຂຕົວຈິງ; ວຽກງານສ່ວຍ

ສາອາກອນ ແລະ ຄັງເງິນແຫ່ງຊາດ ກໍ່ໃຫ້ກຳນົດເປັນຈຸດ ແລະ ໄລຍະຂອງການທົດລອງເຊັ່ນກັນໂດຍມີການສັບຊ້ອນແບ່ງປັນ ດ້ານບຸກຄະລາກອນ, ຈັດສັນງົບປະມານ, ສະຖານທີ່ເຮັດວຽກ ແລະ ພາຫະ ນະອຸປະກອນຕ່າງໆ ລະຫວ່າງພະແນກການເງິນ ແຂວງ, ນະຄອນ ກັບ 3 ພາກສ່ວນ ທີ່ຫັນຂຶ້ນກັບສາຍຕັ້ງຢ່າງເໝາະສົມກັບສະພາບຕົວຈິງ ຂອງແຕ່ລະບ່ອນ. ຫຼັງຈາກດຳເນີນການຫັນໄປໄດ້ໄລຍະໃດໜຶ່ງແລ້ວ ຈຶ່ງດຳເນີນການສະຫຼຸບຖອດຖອນບົດຮຽນ ແລະ ຜັນຂະຫຍາຍກວ້າງອອກໄປແຂວງອື່ນໆ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ;

3. ການຫັນ 3 ວຽກງານໄປສູ່ການຄຸ້ມຄອງລວມສູນຕາມສາຍຕັ້ງນີ້ ໃຫ້ຕິດພັນກັບການປັບປຸງສັບຊ້ອນຖັນແຖວພະນັກງານ-ລັດຖະກອນໄປພ້ອມ ແລະ ໃຫ້ເອົາໃຈໃສ່ປະຕິບັດວຽກນີ້ຢ່າງເລິກເຊິ່ງ ແລະ ມີປະສິດທິຜົນໂດຍສົມທົບກັບອົງການປົກຄອງທ້ອງຖິ່ນຢ່າງລະອຽດ;
4. ຕະຫຼອດໄລຍະປະຕິບັດຕົວຈິງນັ້ນ ມີບັນຫາໃດທີ່ຫຍຸ້ງຍາກ ໃຫ້ລາຍງານລັດຖະບານ ເພື່ອຊີ້ນຳທັນເວລາ. ພາຍຫຼັງຫັນສຳເລັດໄລຍະທົດລອງໃນເບື້ອງຕົ້ນແລ້ວ ໃຫ້ກະຊວງການເງິນ ປະສານກັບອົງການປົກຄອງແຂວງ, ນະຄອນ ທີ່ກ່ຽວຂ້ອງສະຫຼຸບຖອດຖອນບົດຮຽນ ແລະ ລາຍງານລັດຖະບານ ໃນເວລາອັນຄວນ;
5. ຄະນະປັບປຸງອົງການຈັດຕັ້ງລັດ ຊຸກຍູ້, ຕິດຕາມກະຊວງການເງິນ, ອົງການປົກຄອງແຂວງ, ນະຄອນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ພ້ອມທັງລາຍງານໃຫ້ລັດຖະບານຊາບເປັນປະຈຳ ກ່ຽວກັບສະພາບຄວາມຄືບໜ້າ ຂອງການຫັນວຽກງານດັ່ງກ່າວນີ້;
6. ໃຫ້ລັດຖະມົນຕີວ່າການ ກະຊວງການເງິນ ອອກຄຳແນະນຳລະອຽດຕື່ມກ່ຽວກັບເນື້ອໃນ, ວິທີ ແລະ ຂັ້ນຕອນການຫັນຕົວຈິງຂອງສາມວຽກງານດັ່ງກ່າວນີ້. ພ້ອມນັ້ນກໍ່ໃຫ້ເປັນເຈົ້າການ ໃນການສ້າງແຜນປະຕິບັດຕົວຈິງຢ່າງລະອຽດ ແລະ ຊີ້ນຳ, ຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດ ໃຫ້ສຳເລັດຕາມແຜນການ ທີ່ວາງໄວ້;
7. ລັດຖະມົນຕີວ່າການ ກະຊວງການເງິນ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນທົ່ວປະເທດ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ມີຜົນສຳເລັດເປັນຢ່າງດີ.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ

ບົວສອນ ບຸບຜາວັນ